ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ 14 /ສພຂ.ຊຍ

ໄຊຍະບູລີ, ວັນທີ 17 ເມສາ 2026

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ

## ວ່າດ້ວຍ ການຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030)

## ຂອງອົງການກວດກາລັດແຂວງ

- ອີງຕາມ ມາດຕາ 53 ຂອງກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ສະບັບເລກທີ 57/ສພຊ, ລົງວັນທີ 28 ມິຖຸນາ 2024.
- ອີງຕາມ ບົດລາຍງານຂອງອົງການກວດກາລັດແຂວງ ສະບັບເລກທີ 185/ອກລຂ, ລົງວັນທີ 7 ເມສາ 2026 ຕໍ່ກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນແຂວງ ຊຸດທີ V, ໃນວັນທີ 9 ເມສາ 2026.

ຜ່ານການປະກອບຄຳເຫັນ, ຄົ້ນຄວ້າ ແລະ ພິຈາລະນາຢ່າງເລິກເຊິ່ງ ຂອງສະມາຊິກສະພາປະຊາຊົນແຂວງ ຕໍ່ບົດລາຍງານ ກ່ຽວກັບແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການກວດກາລັດແຂວງ. ໃນກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນແຂວງ ຊຸດທີ V, ລະຫວ່າງ ວັນທີ 9-10 ເມສາ 2026.

## ກອງປະຊຸມຕົກລົງ:

**ມາດຕາ 1: ຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການກວດກາແຂວງ**

ກອງປະຊຸມສະພາປະຊາຊົນແຂວງ ເຫັນດີເປັນເອກະພາບ ຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການກວດກາລັດແຂວງ ທີ່ໄດ້ກຳນົດ 5 ທິດທາງລວມ. ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດວຽກງານແຕ່ລະດ້ານ ບັນລຸຕາມຈຸດປະສົງ ແລະ ລະດັບຄາດໝາຍ ກອງປະຊຸມສະເໜີໃຫ້ເອົາໃຈໃສ່ບາງມາດຕະການເພີ່ມເຕີມດັ່ງນີ້:

1. ສືບຕໍ່ຕິດຕາມ, ກວດກາການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການປົກຄອງ ໃນການປະຕິບັດມະຕິ, ຄຳສັ່ງ ແລະ ລະບຽບກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ໂຄງການກໍ່ສ້າງພື້ນຖານໂຄງລ່າງ, ການຈັດຕັ້ງປະຕິບັດໂຄງການທີ່ສະພາອະນຸມັດຢູ່ແຂວງ ແລະ ບັນດາປະກົດການຫຍໍ້ທໍ້ເກີດຂຶ້ນໃນການຄຸ້ມຄອງບໍລິຫານລັດ.
2. ສືບຕໍ່ຕິດຕາມ, ຊຸກຍູ້ ການແກ້ໄຂຜົນຂອງການກວດສອບ ແລະ ລົງເລິກກວດກາບາງກໍລະນີທີ່ມີການລະເມີດວິໄນແຜນການ-ການເງິນ ຕາມການສະໜອງຂໍ້ມູນຂອງອົງການກວດສອບປະຈຳພາກເໜືອ 1.
3. ຕິດຕາມການຫັກລົບມູນຄ່າໂຄງການລົງທຶນຂອງລັດ ທີ່ຕ້ອງໄດ້ສົ່ງເງິນຄືນ ແລະ ປະຕິບັດພັນທະຕໍ່ລັດ ຂອງໂຄງການລົງທຶນ ທີ່ມີມູນຄ່າ 10 ຕື້ກີບຂຶ້ນໄປ ແລະ 10 ຕື້ກີບ ລົງມາຢູ່ແຂວງໄຊຍະບູລີ.



สแกนด้วย CamScanner

4. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ ແລະ ຂັ້ນເມືອງ ໃຫ້ເອົາໃຈໃສ່ໂຄສະນາເຜີຍແຜ່ກົດໝາຍວ່າດ້ວຍ ການຕ້ານການສໍ້ລາດບັງຫຼວງ, ກົດໝາຍວ່າດ້ວຍ ການກວດກາລັດ, ກົດໝາຍວ່າດ້ວຍ ການຕ້ານສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ຍຸດທະສາດສະກັດກັ້ນຕ້ານການສໍ້ລາດບັງຫຼວງ ແລະ ບັນດານິຕິກຳ ທີ່ກ່ຽວຂ້ອງກັບວຽກງານກວດກາ, ສະກັດກັ້ນ, ຕ້ານການສໍ້ລາດບັງຫຼວງ ແລະ ສືບສວນ-ສອບສວນການສໍ້ລາດບັງຫຼວງ.
5. ສືບຕໍ່ຮັບ ແລະ ຄົ້ນຄວ້າພິຈາລະນາຄຳຮ້ອງ-ຄຳສະເໜີ, ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ.
6. ເພີ່ມທະວີກໍ່ສ້າງພະນັກງານກວດກາ ໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງ, ມີຄວາມຮູ້-ຄວາມສາມາດ ເຂົ້າໃຈຕໍ່ພາລະບົດບາດ, ໜ້າທີ່ ດ້ວຍຄວາມຮັບຜິດຊອບສູງ ແລະ ຈັດຝຶກອົບຮົມໃຫ້ຜູ້ເຮັດວຽກກວດກາລັດ ຢູ່ອ້ອມຂ້າງແຂວງ ແລະ ເມືອງຢ່າງທົ່ວເຖິງ.

**ມາດຕາ 2: ຮັບຮອງເອົາບັນດາມາດຕະການຈັດຕັ້ງປະຕິບັດ ຂອງອົງການກວດກາລັດແຂວງ.**

ກອງປະຊຸມ ເຫັນດີຮັບຮອງເອົາ 5 ມາດຕະການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຕາມການສະເໜີຂອງອົງການກວດການລັດແຂວງ. ເພື່ອເຮັດໃຫ້ແຜນການເຄື່ອນໄຫວວຽກງານຂອງອົງການກວດການລັດແຂວງ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິພາບ ແລະ ປະສິດທິຜົນ ກອງປະຊຸມ ສະເໜີໃຫ້ເອົາໃຈໃສ່ບາງມາດຕະການເພີ່ມເຕີມດັ່ງນີ້:

1. ເປັນເຈົ້າການຄົ້ນຄວ້າ, ເຊື່ອມຊຶມ ແລະ ຜັນຂະຫຍາຍ ມະຕິກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນແຂວງ ຊຸດທີ V ໃຫ້ເລິກເຊິ່ງທົ່ວເຖິງ, ທັງສ້າງເປັນແຜນງານ, ໂຄງການ ແລະ ກິດຈະກຳລະອຽດ, ນຳພາ-ຊີ້ນຳ ຈັດຕັ້ງປະຕິບັດ ຕາມພະລະບົດບາດ, ສິດ ແລະ ໜ້າທີ່ ໃຫ້ມີປະສິດທິຜົນ.
2. ສືບຕໍ່ປັບປຸງກົດໝາຍ, ສ້າງນິຕິກຳໃຕ້ກົດໝາຍ ແລະ ຜັນຂະຫຍາຍບາງມາດຕາຂອງກົດໝາຍ ໃຫ້ມີຄວາມຊັດເຈນ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດ ພ້ອມທັງເຜີຍແຜ່ໃຫ້ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນ ໃຫ້ມີຄວາມຮູ້, ເຂົ້າໃຈ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.
3. ໃຫ້ປັບປຸງບັນດາຄາດໝາຍສູ້ຊົນ ຂອງແຜນການໂດຍກຳນົດຕົວຊີ້ວັດ ເພື່ອສາມາດຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.
4. ຕ້ອງເພີ່ມທະວີການ ນຳພາ-ຊີ້ນຳ ຕໍ່ການເຄື່ອນໄຫວ ຊຸກຍູ້, ຕິດຕາມກວດກາ, ສະຫຼຸບຕີລາຄາ ແລະ ຖອດຖອນບົດຮຽນ ໃຫ້ເປັນປົກກະຕິ ແລະ ຕໍ່ເນື່ອງ.
5. ເພີ່ມທະວີກົນໄກການປະສານສົມທົບ ກັບ ອົງການກວດສອບປະຈຳພາກເໜືອ 1, ອົງການໄອຍະການປະຊາຊົນ, ສານປະຊາຊົນ, ກອງບັນຊາການປ້ອງກັນຄວາມສະຫງົບ, ຄະນະກຳມະການຂອງສະພາປະຊາຊົນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ ແລະ ຂັ້ນເມືອງ ໃຫ້ໂລ່ງລຽນ ແລະ ເປັນເອກະພາບກັນ ເພື່ອຮັບປະກັນໃຫ້ແກ່ ການຈັດຕັ້ງປະຕິບັດໜ້າທີ່ວຽກງານໃຫ້ວ່ອງໄວ ແລະ ມີປະສິດທິຜົນ.
6. ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງ ຂອງອົງການກວດກາລັດແຂວງ ໃຫ້ມີຄວາມເຂັ້ມແຂງ ພ້ອມທັງບຳລຸງສ້າງພະນັກງານ-ນັກກວດກາ ດ້ວຍການຍົກສູງຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ໃຫ້ມີຈັນຍາບັນ, ຈັນຍາທຳ, ສັດຊື່ບໍລິສຸດ ມີຄວາມຊຳນານດ້ານວິຊາການ ແລະ ເປັນມືອາຊີບ.
7. ມອບໃຫ້ ຄະນະກຳມະການການປົກຄອງແຂວງ ຄົ້ນຄວ້າຈັດສັນງົບປະມານ ແລະ ອຸປະກອນຮັບໃຊ້ທີ່ຈຳເປັນໃຫ້ອົງການກວດກາລັດແຂວງ ໃນແຕ່ລະປີ ເພື່ອນຳໃຊ້ເຄື່ອນໄຫວວຽກງານ, ກວດກາຕາມພາລະບົດບາດ, ສິດໜ້າທີ່ ໃຫ້ເປັນປົກກະຕິ ແລະ ແບບກະທັນຫັນຕາມຄຳສັ່ງຂອງຂັ້ນເທິງ ເພື່ອເປັນການສະກັດກັ້ນປະກົດການຫຍໍ້ທໍ້ແຕ່ຫົວທີ ແລະ ໃຫ້ສຳເລັດຕາມແຜນການທີ່ວາງໄວ້.



สแกนด้วย CamScanner

**ມາດຕາ 3: ການຈັດຕັ້ງປະຕິບັດ**

1. ມອບໃຫ້ ອົງການກວດກາລັດແຂວງ ເປັນເຈົ້າການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຢ່າງເຂັ້ມງວດ.
2. ມອບໃຫ້ ຄະນະກຳມະການປົກຄອງແຂວງ, ຊີ້ນຳບັນດາພະແນກການ, ອົງການອ້ອມຂ້າງແຂວງ ແລະ ຄະນະກຳມະການປົກຄອງເມືອງ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.
3. ມອບໃຫ້ ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການເສດຖະກິດ, ການເງິນ ແລະ ສິ່ງແວດລ້ອມ, ບັນດາຄະນະກຳມະການ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ຕິດຕາມກວດກາ ການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 4: ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

ເພັງມີລັບ ຄຳພັນເພັງ



สแกนด้วย CamScanner